ຂໍ້ແນະນຳເລັກໆນ້ອຍ ກ່ຽວກັບການດູແລເດັກນ້ອຍ

ເລືອກສູນດູແລເດັກນ້ອຍທີ່ເຫມາະສົມ

ສິ່ງທີ່ທ່ານສາມາດເຮັດໄດ້ເພື່ອຊອກຫາສູນດູແລເດັກນ້ອຍທີ່ມີຄຸນນະພາບ

ຮູນຮູ້ກ່ຽວກັບຄວາມແຕກຕ່າງຂອງສູນດູແລເດັກນ້ອຍທີ່ມີຫລາຍແບບ.

- ເຮືອນເບິ່ງແຍງເດັກນ້ອຍແບບເປັນຄອບຄົວ

ການເບິ່ງແຍງແບບນີ້ແມ່ນການດູແລເດັກຢູ່ໃນເຮືອນຂອງຜູ້ດູແລເດັກນ້ອຍ.

- ສູນເບິ່ງແຍງເດັກນ້ອຍ
  ສ່ວນຫລາຍແລ້ວ,ສູນເບິ່ງແຍງເດັກນ້ອຍຈະມີຂະຫນາດ
  ໃຫຍ່ກວ່າເຮືອນເບິ່ງແຍງເດັກນ້ອຍແບບເປັນຄອບຄົວ
  ແລະສາມາດດຳເນີນການໂດຍແບບສ່ວນບຸກຄົນ,ທຸລະກິດ,ໂຮງຮຽນ,ໂບດຫລື
  ຫນ່ວຍງານສາທາລະນະ.
- ການເບິ່ງແຍງໃນເຮືອນຂອງເດັກ
  ການເບິ່ງແຍງໃນເຮືອນຄືເມື່ອມີບຸກຄົນໃດຫນຶ່ງມາເຮືອນຂອງທ່ານເພື່ອເບິ່ງແຍງເດັກນ້ອຍ.
  ບຸກຄົນນັ້ນອາດຈະເປັນເພື່ອນ,ຍາດພີ່ນ້ອງ,ຫລືຄົນລ້ຽງເດັກນ້ອຍ.
- ຜູ້ໃຊ້ການດູແລຢູ່ເຮືອນ
  ຜູ້ໃຊ້ການດູແລຢູ່ເຮືອນຈະເບິ່ງແຍງທັງລູກຄົນເອງແລະລູກ
  ຈາກຄອບຄົວອື່ນໆ.ເດັກນ້ອຍຈະຮັບການເບິ່ງແຍງຢູ່ເຮືອນ
  ຂອງຜູ້ໃຊ້ການດູແລ.

ຈົ່ງຖາມຄຳຖາມຫລາຍໆ, ເຊັ່ນ:

- ແມ່ນຫຍັງເຮັດໃຫ້ທ່ານມັກເຮັດວຽກກັບເດັກນ້ອຍ?
- ຜູ້ໃຫຍ່ຄົນຫນຶ່ງເບິ່ງແຍງເດັກນ້ອຍຈັກຄົນ?
- ທ່ານຄວບຄຸມເດັກນ້ອຍແນວໃດ? (ຕ້ອງຫມັ້ນໃຈວ່າເຂົາເຈົ້າບໍ່ຕີຫລືຈັບເດັກນ້ອຍສັ່ນ.)
- ເຮົາມາຢ້ຽມຢາມເວລາໃດກໍໄດ້ບໍ່?
- ອາຫານຫລືເຄື່ອງດື່ມແນວໃດທີ່ເຂົາເຈົ້າຈັດຕຽມໃຫ້?
- ທ່ານເຮັດແນວໃດໃນເວລາສຸກເສີນ?ທ່ານໄດ້ຮັບການເຝົ້າແອບກ່ຽວກັບການປະຖົມພະຍາບານແລະCPRບໍ່?
- ຖ້າເດັກນ້ອຍຄົນຫນຶ່ງເຈັບໄຂ້ເດັກຄົນນັ້ນ
  ຈະສາມາດມາຫາສູນດູແລຫລືເຮືອນໄດ້ບໍ່?

ໄປຢ້ຽມຢາມສະຖານທີ່ເບິ່ງແຍງເດັກນ້ອຍເມື່ອເດັກນ້ອຍຢູ່ບ່ອນນັ້ນ.

- ສັງເກດເບິ່ງເວລາທີ່ຜູ້ໃຊ້ການເບິ່ງແຍງເດັກນ້ອຍ
  ອ່ານປື້ມ,ເວົ້າແລະຫລິ້ນກັບເດັກນ້ອຍ.
- ໃຫ້ຫມັ້ນໃຈວ່າມີຄວາມສະອາດ
  ແລະຄວາມປອດໄພບໍ່.
- ໃຫ້ຫມັ້ນໃຈວ່າເຂົາບໍລິການອາຫານທີ່ມີທາດ
  ບຳລຸງຮ່າງກາຍດີບໍ່.
- ເບິ່ງວ່າມີຂອງຫລິ້ນຫລາຍໆປະເພດ
  ສຳລັບເດັກນ້ອຍບໍ່.

ເວົ້າລົມກັບພນັກງານທີ່ເບິ່ງແຍງເດັກນ້ອຍ. ເພື່ອເບິ່ງວ່າ:

- ພະນັກງານໄດ້ຜ່ານການເຝົ້າແອບເປັນພິເສດບໍ່.
- ຜູ້ໃຊ້ການດູແລມີປະສົບການບໍ່.
- ມີພະນັກງານຢູ່ໃນນັ້ນເຫີງສົມຄວນແລ້ວບໍ່.

ຂໍ້ແນະນຳອື່ນໆທີ່ຄວນຈື່:

- ຂໍລາຍຊື່ພໍ່ແມ່ຄົນອື່ນໆທີ່ນຳໃຊ້ບໍລິການທີ່ສູນ.ໂທໄປລົມນຳເຂົາເຈົ້າ.
- ໂທຫາTrustLine
  ແລະກວດສອບປະວັດເລື້ອງຂອງຜູ້ເບິ່ງແຍງເດັກນ້ອຍ.
- ຂໍເບິ່ງບັນທຶກການຂັບຂີ່ຂອງຜູ້ໃຊ້ການເບິ່ງແຍງ
  ຖ້າວ່າລາວເປັນຄົນຂັບຣົດໃຫ້ເດັກນ້ອຍ.
- ຈົ່ງເຊື່ອຄວາມຮູ້ສຶກຂອງຕົນເອງແລະຈ້າງຄົນທີ່ທ່ານແລະ
  ລູກຂອງທ່ານມັກ.
- ເວົ້າລົມກັບຜູ້ທີ່ເບິ່ງແຍງເດັກນ້ອຍແລະເວົ້າເລື້ອງຕ່າງໆ
  ກ່ຽວກັບລູກຂອງທ່ານໃຫ້ລາວຟັງຢ່າງຫນ້ອຍສອງເຖິງ
  ສາມເທື່ອຕໍ່ອາທິດ.

ຕ້ອງການຄວາມຊ່ວຍເຫລືອໃນການຊອກຫາ ການເບິ່ງແຍງເດັກນ້ອຍທີ່ມີຄຸນນະພາບແມ່ນບໍ?

ໂທຫາແຫລ່ງຂໍ້ມູນດ້ານການເບິ່ງແຍງເດັກນ້ອຍຣັຖແຄລິຟໍເນັຽ
ແລະເຄືອຂ່າຍການສ່ຳຕໍ່:
(800) 543-7793

ໂທຫາTrustLine:

(800) 822-8490

ໂທຫາສູນເຊື່ອມຕໍ່ການດູແລເດັກນ້ອຍ:
(800) 543-7793

ການເບິ່ງແຍງ ແລະ ການ ປົກ ປ້ອ ງ ລູ ກ ຂ ອ ງ ທ່ານ

©2003 First 5 California